ຄະນະກຳມະການຮ່ວມມືລາວ-ຈີນ ແລະສູນກາງແນວລາວສ້າງຊາດ ລົງຢ້ຽມຢາມ ໂຄງການ ພັດທະນາເຂດເສດຖະກິດ-ອຸດສາຫະກຳ ທ່ອງທ່ຽວ ວັດທະນະທຳ ເມືອງ ວັງວຽງ

ໃນວັນທີ 26 ມິຖຸນາ 2026

ຄະນະກຳມະການຮ່ວມມືລາວ-ຈີນ ແລະ ສູນກາງແນວລາວສ້າງຊາດ ໄດ້ລົງຢ້ຽມຢາມພາກສະໜາມຂອງ ໂຄງການ ພັດທະນາເຂດເສດຖະກິດ-ອຸດສາຫະກຳທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນ ໂດຍເປັນກຽດເຂົ້າຮ່ວມຂອງ**ທ່ານ ນາງ ແສງເດືອນ ໄຊຍະສອນ ຮອງປະທານຜູ້ປະຈຳການ, ທັງເປັນ ຫົວໜ້າຫ້ອງການ ຄະນະກຳມະການຮ່ວມມືລາວ-ຈີນ ພ້ອມດ້ວຍຄະນະ.**





ໃນການລົງຢ້ຽມຢາມຄັ້ງນີ້ແມ່ນການລົງສຳຫຼວດ ພາກສະໜາມ ແລະ ແລກປ່ຽນຄວາມເຫັນຂອງ ແຕ່ລະພາກສ່ວນ ເພື່ອເຮັດໃຫ້ໂຄງການດັ່ງກ່າວບັນລຸຕາມແຜນປັບປຸງ ແລະ ຟື້ນຟູທຸລະກິດ ແລະ ເພື່ອກຽມເຊັນສັນຍາສຳປະທານໂຄງການພັດທະນາເສດຖະກິດ-ອຸດສາຫະກຳທ່ອງທ່ຽວ ວັດທະນະທຳ ເມືອງວັງວຽງ ແຂວງວຽງຈັນ ກັບ ລັດຖະບານໄລຍະໃກ້ນີ້.



